

ຜ-ຟຟລ ໃຫ້ການສະໜັບສະໜູນທຶນເຂົ້າໃນໂຄງການເພື່ອສັງຄົມ ແລະ ສິ່ງແວດລ້ອມ

ໃນ ວັນທີ 29 ກັນຍາ 2016 ທີ່ຜ່ານມາ, ຜ-ຟຟລ ໄດ້ສົມທົບທຶນ ຈຳນວນ 165,000,000 ກີບ ເຂົ້າໃນໂຄງການ ໂຄສະນາ, ປຸກລະດົມຂະບວນການຮັກສາປ່າໄມ້-ແຫຼ່ງນ້ຳ ເພື່ອສົ່ງເສີມການນຳໃຊ້ພະລັງງານຈາກເຂື່ອນໄຟຟ້ານ້ຳຕົກ ແບບຍືນຍົງ (ຊື່ຫຍໍ້ "ໂຄງການ ເພື່ອສິ່ງແວດລ້ອມ ແລະ ສັງຄົມ") ເຊິ່ງໂຄງການດັ່ງກ່າວນີ້ ເປັນການຮ່ວມມືກັນລະຫວ່າງ ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຮ່ວມກັບ ທີມງານ ນັກວິຊາການ ດ້ານປ່າໄມ້-ແຫຼ່ງນ້ຳ ຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ໂຄງການດັ່ງກ່າວນີ້ ແມ່ນຈະໄດ້ຈັດ ກິດຈະກຳລົງເຄື່ອນໄຫວໂຄສະນາຕາມບ້ານເປົ້າໝາຍໃນເຂດຄຸ້ມຄອງອ່າງນ້ຳງື່ມ, ຜະລິດສື່ສິ່ງພິມໂຄສະນາຕ່າງໆ ແລະ ຍັງມີການຜະລິດລາຍການໂຄສະນາທາງວິທະຍຸກະຈາຍສຽງ ແລະ ໂທລະໂຄ່ງ ເພື່ອເຮັດໃຫ້ປະຊາຊົນມີຄວາມຮູ້ຄວາມ ເຂົ້າໃຈກ່ຽວກັບການພັດທະນາເຂື່ອນໄຟຟ້ານ້ຳຕົກ ແລະ ການປົກປັກຮັກສາປ່າຕົ້ນນ້ຳ, ຊຶ່ງໂຄງການມີໄລຍະດຳເນີນການ 5ປີ (2016-2020). ນອກນັ້ນ ໂຄງການນີ້ຍັງໄດ້ຮັບທຶນສົມທົບຈາກລັດຖະບານ ແລະ ທະນາຄານໂລກ ພ້ອມທັງການ ສົມທົບທຶນຈາກ ຫຼາຍພາກສ່ວນຄື ໄຟຟ້ານ້ຳງື່ມ 5, ໄຟຟ້ານ້ຳງື່ມ 2.